**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1932 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 07 ຕຸລາ 2024

# ຂໍ້ຕົກລົງ
# ວ່າດ້ວຍໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ

- ອີງຕາມ ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ວັນທີ 27 ທັນວາ 2013;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳ ສະບັບເລກທີ 2465/ກອກ.ສປ, ລົງວັນທີ 11 ກັນຍາ 2024.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວຂອງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ເພື່ອເຮັດໃຫ້ວຽກງານດັ່ງກ່າວຖືກຕ້ອງຕາມຫຼັກວິຊາການ ແລະ ໄດ້ມາດຕະຖານດ້ານສິ່ງແວດລ້ອມ ແນໃສ່ຮັບປະກັນດ້ານຄວາມປອດໄພ ແລະ ຫຼຸດຜ່ອນຄວາມສ່ຽງ ທີ່ຈະເກີດຜົນກະທົບຕໍ່ສຸຂະພາບ, ສິ່ງແວດລ້ອມ ແລະ ສັງຄົມ ປະກອບສ່ວນເຂົ້າໃນການພັດທະນາອຸດສາຫະກຳປຸງແຕ່ງ ໄປຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ

ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ແມ່ນໜ່ວຍງານຄຸ້ມຄອງ, ຕິດຕາມ ກວດກາ ແລະ ແກ້ໄຂບັນຫາສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ.

### ມາດຕາ 3 ອະທິບາຍຄຳສັບ

ຄຳສັບໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂຮງງານອຸດສາຫະກຳປຸງແຕ່ງ** ໝາຍເຖິງ ອາຄານ ຫຼື ສະຖານທີ່ ເພື່ອດຳເນີນກິດຈະການຜະລິດ, ປຸງແຕ່ງ, ແປຮູບ ວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ດ້ວຍການນຳໃຊ້ເຄື່ອງ

ຈັກ ຫຼື ແຮງງານຄົນ ໂດຍຜ່ານຂະບວນການຜະລິດ, ປະກອບ, ສ້ອມແປງ, ຟື້ນຟູ, ປັບປຸງ, ບັນຈຸ, ຄັດແຍກ ຫຼື ປຸງແຕ່ງຄືນໃໝ່;

2. ການຄຸ້ມຄອງສິ່ງແວດລ້ອມ ໝາຍເຖິງ ການກຳນົດ ແລະ ຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຫຼຸດຜ່ອນມົນລະພິດ ແລະ ສິ່ງເສດເຫຼືອຈາກການດຳເນີນກິດຈະການໂຮງງານ, ລວມທັງການຕິດຕາມກວດກາ ແລະ ແກ້ໄຂບັນຫາຜົນກະທົບທີ່ເກີດຂຶ້ນ;

3. ການຄຸ້ມຄອງຄວາມປອດໄພ ໝາຍເຖິງ ການປ້ອງກັນອຸປະຕິເຫດແຮງງານ ແລະ ການຮັບປະກັນຄວາມປອດໄພ ແລະ ສຸຂະອະນາໄມດ້ານແຮງງານ;

4. ມົນລະພິດ ໝາຍເຖິງ ທາດເຄມີ, ຝຸ່ນ, ຄວັນ, ລວມທັງ ສຽງ, ແສງ, ກິ່ນ, ການສັ່ນສະເທືອນ ທີ່ປົນເປື້ອນໃນດິນ, ນ້ຳ, ອາກາດ ທີ່ມີຄ່າຄວາມເຂັ້ມຂຸ້ນ ເກີນມາດຕະຖານສິ່ງແວດລ້ອມ;

5. ລະບົບບຳບັດມົນລະພິດ ໝາຍເຖິງ ຂະບວນການ ບຳບັດ, ຫຼຸດຜ່ອນ ຫຼື ກຳຈັດມົນລະພິດທີ່ເກີດຈາກໂຮງງານ, ຊຶ່ງປະກອບດ້ວຍວິທີການ ແລະ ເຄື່ອງຈັກ ຫຼື ອຸປະກອນຕ່າງໆ ຕົວຢ່າງ: ລະບົບບຳບັດ ນ້ຳເສຍຄຸນ, ມົນລະພິດທາງອາກາດ ແລະ ການກຳຈັດສິ່ງເສດເຫຼືອທີ່ເປັນອັນຕະລາຍ;

6. ພະນັກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ໝາຍເຖິງ ບຸກຄະລາກອນ ທີ່ຮັບຜິດຊອບວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ແລະ ໄດ້ຮັບການແຕ່ງຕັ້ງ ໂດຍຜູ້ດຳເນີນກິດຈະການໂຮງງານ;

7. ຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພປະຈຳໂຮງງານ ໝາຍເຖິງ ບຸກຄະລາກອນ ໄດ້ຮັບການແຕ່ງຕັ້ງ ໂດຍຜູ້ດຳເນີນກິດຈະການໂຮງງານ ແລະ ຜ່ານການຝຶກອົບຮົມເປັນຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພປະຈຳໂຮງງານ ຈາກກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ

**ມາດຕາ 5 ໂຮງງານອຸດສາຫະກຳປຸງແຕ່ງ ທີ່ຕ້ອງສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ**

ໂຮງງານອຸດສາຫະກຳປຸງແຕ່ງ ທີ່ຕ້ອງສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ມີຄື: ໂຮງງານອຸດສາຫະກຳປຸງແຕ່ງ ທີ່ມີຄວາມສ່ຽງດ້ານສິ່ງແວດລ້ອມ ລະດັບ ສູງ ແລະ ກາງ.

ໂຮງງານອຸດສາຫະກຳປຸງແຕ່ງ ທີ່ມີຄວາມສ່ຽງດ້ານສິ່ງແວດລ້ອມ ລະດັບສູງ, ລະດັບກາງ ແລະ ລະດັບຕ່ຳ ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍ ການຈັດລະດັບຄວາມສຽງຜົນກະທົບດ້ານສິ່ງແວດລ້ອມຂອງໂຮງງານອຸດສາຫະກຳປຸງແຕ່ງ.

ສຳລັບໂຮງງານອຸດສາຫະກຳປຸງແຕ່ງ ທີ່ມີຄວາມສ່ຽງດ້ານສິ່ງແວດລ້ອມລະດັບຕ່ຳ ບໍ່ຈຳເປັນຕ້ອງສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ແຕ່ຕ້ອງມີພະນັກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ທີ່ມີຄວາມຮູ້ວິຊາສະເພາະ ຫຼື ຜ່ານການຝຶກອົບຮົມ ກ່ຽວກັບສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຢ່າງໜ້ອຍ ໜຶ່ງ ຄົນ.

**ມາດຕາ 6 ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ**

ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ປະກອບມີ:

1. ຄະນະອຳນວຍການຂອງໂຮງງານອຸດສາຫະກຳປຸງແຕ່ງ ເປັນຫົວໜ້າໜ່ວຍງານ;

2. ພະນັກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຕ້ອງມີຢ່າງໜ້ອຍ ສອງ ຄົນຂຶ້ນໄປ, ຊຶ່ງໃນນັ້ນຕ້ອງມີ ໜຶ່ງ ຄົນຂຶ້ນໄປ ທີ່ໄດ້ຜ່ານການຝຶກອົບຮົມ ແລະ ໄດ້ຮັບການຢັ້ງຢືນເປັນຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຈາກກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 7 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ**

ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຮັບຜິດຊອບລວມໃນການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ;

2. ສຶກສາ, ຄົ້ນຄວ້າ, ກຳນົດວິທີການ ແລະ ມາດຕະການໃນການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ;

3. ສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແກ້ໄຂບັນຫາສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ;

4. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ອຸດສາຫະກຳ ເພື່ອຕິດຕາມ, ກວດກາ ແລະ ແກ້ໄຂບັນຫາສິ່ງແວດລ້ອມ ແລະ ຄວາມປອດໄພ ທີ່ເກີດຂຶ້ນຢູ່ໂຮງງານ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕໍ່ກັບການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ;

6. ຕິດຕາມ ແລະ ກວດກາ ການນຳໃຊ້ເຊື້ອເພີງ, ນ້ຳ ແລະ ວັດຖຸດິບເຂົ້າໃນຂະບວນການຜະລິດຂອງໂຮງງານ;

7. ບຳລຸງຮັກສາ ແລະ ປັບປຸງແກ້ໄຂ ລະບົບບຳບັດມົນລະພິດ ແລະ ການກຳຈັດສິ່ງເສດເຫຼືອໃຫ້ໃຊ້ງານໄດ້ຢ່າງເປັນປົກກະຕິ;

8. ກະກຽມມາດຕະການແກ້ໄຂ ແລະ ຕອບໂຕ້ເຫດສຸກເສີນດ້ານສິ່ງແວດລ້ອມ ແລະ ຄວາມປອດໄພ;

9. ຕິດຕາມ, ກວດກາ, ວັດແທກ ແລະ ບັນທຶກຂໍ້ມູນມົນລະພິດ ແລະ ສິ່ງເສດເຫຼືອ ທີ່ເກີດຈາກການດຳເນີນກິດຈະການໂຮງງານ;

10. ຄວບຄຸມການດຳເນີນງານຂອງລະບົບບຳບັດມົນລະພິດ ທາງນ້ຳ, ອາກາດ ແລະ ສິ່ງເສດເຫຼືອ ໃຫ້ໄດ້ມາດຕະຖານຕາມກົດໝາຍ ແລະ ລະບຽບການກຳນົດ, ລວມທັງບຳລຸງຮັກສາ ແລະ ປັບປຸງແກ້ໄຂ ລະບົບບຳບັດດັ່ງກ່າວໃຫ້ໃຊ້ງານໄດ້ຢ່າງເປັນປົກກະຕິ;

11. ສ້າງຄວາມຮັບຮູ້ ແລະ ຄວາມອາດສາມາດແກ່ພະນັກງານພາຍໃນໂຮງງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ;

12. ຕອບໂຕ້ເຫດສຸກເສີນດ້ານສິ່ງແວດລ້ອມ ແລະ ຄວາມປອດໄພ ທີ່ເກີດຈາກການດຳເນີນກິດຈະການໂຮງງານ;

13. ສ້າງບົດລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ ເພື່ອລາຍງານຕໍ່ຜູ້ອຳນວຍການໂຮງງານ ໜຶ່ງ ຄັ້ງຕໍ່ອາທິດ;

14. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມການຊີ້ນຳຂອງຫົວໜ້າໜ່ວຍງານໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ເງື່ອນໄຂຜູ້ເຂົ້າຮ່ວມຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພປະຈຳໂຮງງານ

### ມາດຕາ 8 ເງື່ອນໄຂຜູ້ເຂົ້າຮ່ວມຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ

ຜູ້ເຂົ້າຮ່ວມຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຕ້ອງມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ມີວຸດທິການສຶກສາລະດັບຊັ້ນສູງຂຶ້ນໄປ ໃນສາຂາວິຊາສະເພາະດ້ານສິ່ງແວດລ້ອມ, ຄວາມປອດໄພ, ເຄມີ, ວິສະວະກຳສຸຂາພິບານ, ການຢາ, ຊີວະ, ຟີຊິກ, ຄຸ້ມຄອງໂຮງງານ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;

2. ພະນັກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

3. ມີປະສົບການເຮັດວຽກກ່ຽວຂ້ອງກັບວຽກງານດ້ານສິ່ງແວດລ້ອມ ແລະ ຄວາມປອດໄພ ມາແລ້ວ ຢ່າງໜ້ອຍ ສາມ ປີຂຶ້ນໄປ.

### ມາດຕາ 9 ການປະກອບເອກະສານຝຶກອົບຮົມ

ຜູ້ທີ່ມີຈຸດປະສົງເຂົ້າຮ່ວມຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ໃຫ້ປະກອບເອກະສານຍື່ນຄຳຮ້ອງຕໍ່ກົມອຸດສາຫະກຳ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງກົມອຸດສາຫະກຳ;

2. ສຳເນົາໃບປະກາດສະນີຍະບັດຊັ້ນສູງຂຶ້ນໄປ ຫຼື ສຳເນົາໃບຢັ້ງຢືນປະສົບການດ້ານສິ່ງແວດລ້ອມ ແລະ ຄວາມປອດໄພ ຢ່າງໜ້ອຍ ສາມ ປີ;

3. ຊີວະປະຫວັດຫຍໍ້;

4. ໃບນຳສົ່ງຈາກໂຮງງານ (ກໍລະນີເປັນພະນັກງານປະຈຳຂອງໂຮງງານ).

### ມາດຕາ 10 ການຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ

ການຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຕ້ອງດຳເນີນການຈັດຝຶກອົບຮົມ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ ໂດຍກົມອຸດສາຫະກຳ ຈະດຳເນີນການອອກແຈ້ງການກ່ຽວກັບການຝຶກອົບຮົມລ່ວງໜ້າຢ່າງໜ້ອຍ ໜຶ່ງ ເດືອນ.

ການຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຈະດຳເນີນຕາມຫຼັກສູດສະເພາະ, ພາຍຫຼັງສຳເລັດການຝຶກອົບຮົມ ຕ້ອງໄດ້ມີການສອບເສັງວັດລະດັບ ແລະ ຕ້ອງຜ່ານຕາມລະດັບຄາດໝາຍທີ່ກຳນົດໄວ້, ກົມອຸດສາຫະກຳ ຈຶ່ງສາມາດອອກໃບຢັ້ງຢືນເປັນຜູ້ຄຸ້ມຄອງສິ່ງແວດ ລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ໃຫ້ພາຍໃນ ຫ້າ ວັນລັດຖະການ ນັບແຕ່ມື້ສອບເສັງຜ່ານ. ກໍລະນີສອບເສັງບໍ່ຜ່ານ ຈະໄດ້ລົງທະບຽນ, ຝຶກອົບຮົມ ແລະ ສອບເສັງຄືນໃໝ່.

ສຳລັບເນື້ອໃນການຝຶກອົບຮົມເປັນຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ໄດ້ກຳນົດໄວ້ໃນປຶ້ມຫຼັກສູດການຝຶກອົບຮົມ, ຊຶ່ງຈະມີການພັດທະນາ ເປັນແຕ່ລະໄລຍະ.

**ມາດຕາ 11 ໃບຢັ້ງຢືນເປັນຜູ້ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ**

ໃບຢັ້ງຢືນເປັນຜູ້ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ແມ່ນໜັງສືຢັ້ງຢືນການຮັບຮອງ ຜູ້ທີ່ສຳເລັດການຝຶກອົບຮົມຜູ້ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ອອກໃຫ້ໂດຍກົມອຸດສາຫະກຳ ຊຶ່ງມີອາຍຸການນຳໃຊ້ ຫ້າ ປີ.

ພາຍຫຼັງໝົດອາຍຸການນຳໃຊ້ ຈະໄດ້ລົງທະບຽນ, ຝຶກອົບຮົມ ແລະ ສອບເສັງຄືນໃໝ່.

## ໝວດທີ 4

## ສິດ ແລະ ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ

**ມາດຕາ 12 ສິດຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ມີ ສິດ ດັ່ງນີ້:

1. ເຄື່ອນໄຫວວຽກງານສິ່ງແວດລ້ອມ ແລະ ຄວາມປອດໄພໂຮງງານ ຕາມກົດໝາຍ ແລະ ລະບຽບການ;

2. ແຕ່ງຕັ້ງ, ປ່ຽນແປງ ຫຼື ຍົກເລີກພະນັກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພໂຮງງານ;

5. ສະເໜີພະນັກງານເຂົ້າຮ່ວມຝຶກອົບຮົມສ້າງຄວາມອາດສາມາດໃນການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 ພັນທະຂອງຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ**

ຜູ້ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ມີ ພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບສິ່ງແວດລ້ອມ ແລະ ຄວາມປອດໄພໂຮງງານ ຢ່າງເຂັ້ມງວດ;

2. ສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

3. ຈັດຝຶກອົບຮົມດ້ານການຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ໃຫ້ພະນັກງານ ແລະ ຜູ້ອອກແຮງງານ ເປັນປົກກະຕິຢູ່ໃນໂຮງງານຂອງຕົນ;

4. ຈັດຈ້າງຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພປະຈຳໂຮງງານ ພາຍຫຼັງ ສອງ ປີນັບຕັ້ງແຕ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ;

5. ແຈ້ງໃຫ້ກົມອຸດສາຫະກຳ ກ່ຽວກັບການແຕ່ງຕັ້ງ, ປ່ຽນແປງ ຫຼື ຍົກເລີກ ພະນັກງານຄຸ້ມຄອງຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ພາຍໃນ ໜຶ່ງ ເດືອນ;

6. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານຂອງຕົນ;

7. ຮັບຜິດຊອບຕໍ່ຜົນເສຍຫາຍທັງໝົດທີ່ເກີດຈາກຜົນກະທົບດ້ານສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ;

8. ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກແກ່ເຈົ້າໜ້າທີ່ລັດ ໃນການປະຕິບັດໜ້າທີ່;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພປະຈໍາໂຮງງານ ໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ປະຈໍາ ຫົກ ເດືອນ ແລະ ໜຶ່ງ ປີ ຕາມການແບ່ງຂັ້ນຄຸ້ມຄອງ;

10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 14 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກາ ດັ່ງນີ້:

1. ສ້າງອຸປະສັກ, ສິ່ງກີດຂວາງ ຫຼື ຂັດຂວາງ ການເຄື່ອນໄຫວວຽກງານຂອງເຈົ້າໜ້າ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈໍາໂຮງງານ;

2. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພໂຮງງານ;

3. ປອມແປງເອກະສານ ແລະ ນໍາໃຊ້ເອກະສານປອມແປງ;

4. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 15 ຂໍ້ຫ້າມສໍາລັບຜູ້ດໍາເນີນກິດຈະການໂຮງງານ

ຫ້າມຜູ້ດໍາເນີນກິດຈະການໂຮງງານມີພຶດຕິກໍາ ດັ່ງນີ້:

1. ປອມແປງເອກະສານ ແລະ ນໍາໃຊ້ເອກະສານປອມແປງ;

2. ໃຫ້ຂໍ້ມູນຂ່າວສານ ກ່ຽວກັບຜູ້ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພໂຮງງານ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ;

3. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 16 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ອໍານາດ, ໜ້າທີ່, ຕໍາແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລໍາອຽງ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກໍາທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ປອມແປງເອກະສານ ຫຼື ນໍາໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບຂອງລັດ, ຄວາມລັບທາງລັດທະການ ຫຼື ທໍາລາຍເອກະສານ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມ ສຳລັບໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ**

ຫ້າມໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ມີພຶດຕິກຳ ດັ່ງນີ້:

1. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ;

2. ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພຂອງໂຮງງານ ບິດເບືອນ ຫຼື ບໍ່ຖືກຕ້ອງຕາມຄວາມເປັນຈິງ;

3. ບໍ່ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ອຸດສາຫະກຳ ເພື່ອຕິດຕາມ, ກວດກາ ແລະ ແກ້ໄຂບັນຫາສິ່ງແວດລ້ອມ ແລະ ຄວາມປອດໄພ ທີ່ເກີດຂຶ້ນຢູ່ໂຮງງານ;

4. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ

**ມາດຕາ 18 ການຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມອຸດສາຫະກຳ;

2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;

3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງກົມອຸດສາຫະກຳ**

ກົມອຸດສາຫະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

2. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

3. ສ້າງ ແລະ ປັບປຸງຄູ່ມືຝຶກອົບຮົມຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

4. ຮັບຄຳຮ້ອງ ແລະ ຈັດຝຶກອົບຮົມ ຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

5. ພິຈາລະນາອອກ ໃບຢັ້ງຢືນເປັນຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

6. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

7. ພິວພັນຮ່ວມມື ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຕໍ່ກັບວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ໃຫ້ຂັ້ນເທິງຊາບ ໜຶ່ງ ຄັ້ງຕໍ່ປີ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

2. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໜ່ວຍງານສິ່ງແວດ ລ້ອມ ແລະ ຄວາມປອດໄພປະຈຳໂຮງງານ;

3. ຮັບຄຳຮ້ອງຂໍເຂົ້າຮ່ວມຝຶກອົບຮົມ ຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານແລ້ວ ນຳສົ່ງໃຫ້ກົມອຸດສາຫະກຳ ເພື່ອພິຈາລະນາ;

4. ພົວພັນຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

5. ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ພາຍໃນແຂວງ, ນະຄອນຫຼວງ ຂອງຕົນ ໃຫ້ກົມອຸດສາຫະກຳ ຊາບ ປະຈຳທຶກ ເດືອນ ແລະ ໜຶ່ງປີ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

2. ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການສ້າງຕັ້ງໜ່ວຍງານສິ່ງແວດ ລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

3. ຮັບຄຳຮ້ອງຂໍເຂົ້າຮ່ວມຝຶກອົບຮົມ ຜູ້ຮັບຜິດຊອບຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານແລ້ວ ນຳສົ່ງໃຫ້ກົມອຸດດສາຫະກຳ ເພື່ອພິຈາລະນາ;

4. ພົວພັນຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກັບວຽກງານການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ;

5. ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັງປະຕິບັດ ວຽກງານການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ຄວາມປອດໄພ ປະຈຳໂຮງງານ ພາຍໃນເມືອງ, ນະຄອນຂອງຕົນ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໜຶ່ງຄັ້ງຕໍ່ປີ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 7
# ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ລົງຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການສ້າງຕັ້ງໜ່ວຍງານສິ່ງແວດລ້ອມ ແລະ ເຄມີ ປະຈຳ ໂຮງງານ ສະບັບເລກທີ 1155/ອຄ, ລົງວັນທີ 11 ມິຖຸນາ 2010.

**ລັດຖະມົນຕີ**

ນະໄລທອງ ກົມມະສິດ